ສຳນັກງານ ຄຄຊ
ຮັບ
ເລກທີ 0944
ວັນທີ 10 SEP 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 36 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 06 ກັນຍາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 13-17/08/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,67% ທຽບໃສ່ເອີໂຣ ເນື່ອງຈາກທີ່ພາຍຫຼັງກະຊວງການຄ້າຂອງສະຫາລັດອາເມລິກາ ລາຍງານວ່າ ຕົວເລກຍອດຂາຍສິນຄ້າຂາຍຍ່ອຍ ໃນເດືອນ 07/2018 ເພີ່ມຂຶ້ນຢູ່ທີ່ 0,5% ຈາກ 0,2% ໃນເດືອນຜ່ານມາ ແລະ ໃບອະນຸຍາດການກໍ່ສ້າງ ໃນເດືອນ 7/2018 ເພີ່ມຂຶ້ນຢູ່ທີ່ 1,5% ຈາກຫຼຸດລົງ 0,7% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 06-10/08/2018 | ອາທິດນີ້ 13-17/08/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1459 | 1,1383 | 0,67% |
| ເຢນ/ໂດລາ | 110,93 | 110,55 | 0,34% |
| ບາດ/ໂດລາ | 33,250 | 33,240 | 0,03% |
| ເປໂຊ/ໂດລາ | 53,15 | 53,41 | -0,48% |
| ຣູເປັຍ/ໂດລາ | 14.470,00 | 14.605,00 | -0,92% |
| ໂດລາສິງກະໂປ/ໂດລາ | 1,3710 | 1,3753 | -0,31% |
| ຢວນ/ໂດລາ | 6,8516 | 6,8784 | -0,39% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 1,75% ຈາກ 66,76 ໂດລາ/ບາເຣວ ມາເປັນ 65,59 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງສະຫາລັດອາເມລິກາ ເພີ່ມຂຶ້ນ 6,80 ລ້ານບາເຣວ ໃນອາທິດທີ 10/08/2018 ຈາກຫຼຸດລົງ 1,35 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳຫຼຸດລົງ 2,75% ຈາກ 1.209,61 ໂດລາ/ອອນ ມາເປັນ 1.176,31 ໂດລາ/ອອນ ເນື່ອງຈາກການແຂງຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,48% ແລະ ອ່ອນຄ່າລົງ 0,49% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,99% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,05% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 10/08/2018 | | | ອາທິດນີ້ 17/08/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.601,39 | 8.635,00 | 8.616,62 | 8.646,38 | 8.667,30 | 8.658,37 | -0,52% | -0,37% | -0,48% | -3,99% | -3,93% | -3,99% |
| ບາດ | 262,24 | 263,42 | 262,94 | 263,68 | 264,71 | 264,22 | -0,55% | -0,49% | -0,49% | -3,28% | -3,00% | -3,05% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາ ຫຼຸດລົງ 0,87% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 7,73%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,17% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,66%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (10-16/08/2018) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 3,76 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 30,13 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 33,89 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 188,54 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 136,43 ລ້ານບາດ ແລະ ຂາຍເງິນບາດໄດ້ 324,97 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ເພີ່ມຂຶ້ນ 6,75% ແຕ່ເງິນບາດ ຫຼຸດລົງ 11,27%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 8,78 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 155,99 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 4,90 ລ້ານໂດລາ ແລະ ເງິນບາດ ຈຳນວນ 45 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 03-09/08/2018 | | ອາທິດນີ້ 10-16/08/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **22,33** | **181,10** | **30,13** | **136,43** | **34,93%** | **-24,67%** |
| - ທ/ຄທຸລະກິດລັດ | 11,53 | 50,45 | 10,43 | 88,38 | -9,54% | 75,18% |
| - ທ/ຄທຸລະກິດອື່ນໆ | 10,80 | 130,65 | 19,70 | 48,05 | 82,41% | -63,22% |
| **2. ການຂາຍເງິນຕາຕ່າງປະເທດ** | **37,64** | **338,91** | **33,89** | **324,97** | **-9,96%** | **-4,11%** |
| - ທ/ຄທຸລະກິດລັດ | 9,77 | 84,45 | 6,43 | 158,41 | -34,19% | 87,58% |
| - ທ/ຄທຸລະກິດອື່ນໆ | 27,87 | 254,46 | 27,46 | 166,56 | -1,47% | -34,54% |
| **ຊື້-ຂາຍສຸດທິ ທທກ** | **-15,31** | **-157,81** | **-3,76** | **-188,54** | **-75,44%** | **19,47%** |
| - ຜິດດ່ຽງຊື້-ຂາຍ | -68,56% | -87,14% | -12,48% | -138,20% | -81,80% | 58,59% |
| **- ມູນຄ່າການຊື້-ຂາຍ** | **59,97** | **520,01** | **64,02** | **461,40** | **6,75%** | **-11,27%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-15,95** | **-119,81** | **-8,78** | **-155,99** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,50 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 15,95 | 119,81 | 9,28 | 155,99 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **0,90** | **5,15** | **4,90** | **45,00** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 08/2018 ຄາດວ່າຈະຢູ່ໃນລະດັບ 2,75% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 88,5% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 107,63 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 13,3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 74,01 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 808 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 154 ສະບັບ ເທົ່າກັບ 23,55% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 418,77 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 125,14 ຕື້ກີບ ເທົ່າກັບ 42,62%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (10-16/08/2018) ມີທັງໝົດ 3.388 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.360 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 180 ຕື້ກີບ ຈາກ 821,11 ຕື້ກີບ ມາເປັນ 1.000,97 ຕື້ກີບ ເທົ່າກັບ 21,90%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 28 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 42,80 ຕື້ກີບ ຈາກ 30,97 ຕື້ກີບ ມາເປັນ 73,77 ຕື້ກີບ ເທົ່າກັບ 138,20%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 873,58 ຈຸດ ຫຼຸດລົງ ຈາກ 888,12 ຈຸດ ຫຼື ເທົ່າກັບ 0,97% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 488.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,63 ຕື້ກີບ ເພີ່ມຂຶ້ນ 294,19% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 17,50% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ EDL-Gen, LWPC, PTL ແລະ LCC. ສ່ວນສາເຫດການເພີ່ມຂຶ້ນຂອງມູນຄ່າການຊື້-ຂາຍ ແມ່ນມາຈາກຮຸ້ນຂອງ BCEL ມີການຊື້-ຂາຍ ທີ່ເພີ່ມຂຶ້ນເຖິງ 473,50% ເນື່ອງຈາກອາທິດນີ້ BCEL ເປີດເຜີຍຂ່າວ ກ່ຽວກັບພິທີລົງນາມການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນ ສາຍໃຍສຳພັນ ວ່າດ້ວຍການຊຳລະສະສາງຄ່າບໍລິການຕ່າງໆຜ່ານ BCEL (Payment).

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (ກີບ) | ລາຄາ ປ່ຽນແປງ (%) |
| BCEL | 76.200 | 418.570.000 | 5.650 | **428.900** | **2.400.485.000** | **5.700** | 462,86 | 473,50 | 0,88 | 76.200 |
| EDL-GEN | 55.700 | 234.765.000 | 4.250 | **53.300** | **222.525.000** | **4.200** | -4,31 | -5,21 | -1,18 | 55.700 |
| LWPC | - | - | 8.750 | - | - | **8.400** | - | - | -4,00 | - |
| PTL | 100 | 170.000 | 1.700 | **500** | **800.000** | **1.600** | 400,00 | 370,59 | -5,88 | 100 |
| SVN | 6.200 | 12.220.000 | 1.800 | **3.900** | **7.050.000** | **1.950** | -37,10 | -42,31 | 8,33 | 6.200 |
| PCD | - | - | 1.200 | **200** | **250.000** | **1.200** | - | - | 0,00 | - |
| LCC | 1.000 | 2.400.000 | 2.400 | **1.200** | **2.570.000** | **2.100** | 20,00 | 7,08 | -12,50 | 1.000 |
| ທັງໝົດ | 139.200 | 668.125.000 | - | **488.000** | **2.633.680.000** | - | 250,57 | 294,19 | | 139.200 |

## 5. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມທ່ານນາຍົກ-ຮອງນາຍົກລັດຖະມົນຕີ, ❷ ກອງປະຊຸມສຳມະນາລະດັບສູງ ແລະ ກອງປະຊຸມລະດັບຮອງຜູ້ວ່າການ ກ່ຽວກັບວຽກງານສະຖຽລະພາບການເງິນ ແລະ ການຄຸ້ມຄອງທະນາຄານຄັ້ງທີ 9 (ປະເທດມາເລເຊຍ), ❸ ກອງປະຊຸມປຶກສາຫາລືສ້າງແຜນໂຄງການການເງິນຈຸລະພາກ, ການເຂົ້າຫາແຫຼ່ງທຶນຂອງຜູ້ທຸກຍາກໃນເຂດຊົນນະບົດໄລຍະທີ V, ❹ ກອງປະຊຸມ ຮ່າງນິຕິກຳຄຸ້ມຄອງເງິນຕາຕ່າງປະເທດ, ❺ ຝຶກອົບຮົມວຽກງານກອດກາ ຄັ້ງທີ X ປະຈຳປີ 2018 ໃຫ້ແກ່ພະນັກງານໃນຂະແໜງການທະນາຄານ ແລະ ❻ ພິທີພົບປະ ແລະ ນຳສະເໜີໃນງານນະວັດຕະກຳທາງດ້ານການເງິນ (Fintech) ທີ່ມາຈາກປະເທດສິງກະໂປ;
- ສຳເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຜູ້ຕາງໜ້າທະນາຄານໂລກ ປະຈຳ ສປປ ລາວ ຄົນໃໝ່.

### III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ຢ່າງໃກ້ຊິດ;
- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມລັດຖະບານສະໄໝສາມັນ ປະຈໍາເດືອນ ສິງຫາ 2018, ❷ ກອງປະຊຸມການສ້າງແຜນງົບປະມານແຫ່ງລັດ ປະຈໍາປີ 2019, ❸ ກອງປະຊຸມປຶກສາຫາລືກ່ຽວກັບການຄົ້ນຄວ້າບັນຫາເງິນດິຈິຕອລແບບໃສ່ລະຫັດ ໂດຍສະເພາະເງິນບິດຄອຍ, ❹ ກອງປະຊຸມສະຫຼຸບບົດລາຍງານການປະເມີນຄວາມສ່ຽງລະດັບຊາດຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❺ ກອງປະຊຸມເຜີຍແຜ່ການເຄື່ອນໄຫວຂອງຄະນະຮັບຜິດຊອບ ແລະ ແຈ້ງການກ່ຽວກັບການຈັດຕັ້ງປະຕິບັດການກໍານົດຕໍາແໜ່ງງານ, ❻ ກອງປະຊຸມຄະນະງົບປະມານ ແລະ ພິທີການ ແລະ ສະຖານທີ່ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ;
- **ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ:** ❶ ຮອງປະທານອາວຸໂສຂອງ ສະພາທຸລະກິດສະຫະລັດອາເມລິກາ-ອາຊຽນ, ❷ ບໍລິສັດ CRANE currency ແລະ ❸ ສະຫະພັນແມ່ຍິງຮາກຖານ ທຫລ ເນື່ອງໃນວັນສ້າງຕັ້ງສະຫະພັນແມ່ຍິງ ຄົບຮອບ 63 ປີ.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ